ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 057 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 27.01.2014

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ, ສະບັບເລກທີ 018 /ສພຊ, ລົງວັນທີ 19 ທັນວາ 2013;
- ອີງຕາມສີຫັງສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 07 /ຄປຈ, ລົງວັນທີ 23/01/2014.

ປະທານປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ                                        ເລກທີ 018 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບ ແຫ່ງຊາດ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ໃນວາລະກອງປະຊຸມຕອນບ່າຍ ຂອງວັນທີ 19 ທັນວາ 2013

**ກອງປະຊຸມໄດ້ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 19 ທັນວາ 2013

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ ເລກທີ 40 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 19 ທັນວາ 2013

# ກົດໝາຍ

# ວ່າດ້ວຍ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ, ການຈັດຕັ້ງເຄື່ອນໄຫວຊີ້ນຳ ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ເພື່ອຍົກສູງປະສິດທິພາບໃນການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບແຫ່ງຊາດ ທັງເຮັດໃຫ້ວຽກງານດັ່ງກ່າວເປັນຄວາມຮັບຜິດຊອບຂອງທົ່ວປວງຊົນລາວເຂົ້າໃນການເຮັດໜ້າທີ່ປ້ອງກັນຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຢ່າງເປັນຂະບວນໜັກແໜ້ນເຂັ້ມແຂງ ແນໃສ່ຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບ ແລະ ຄວາມໝັ້ນຄົງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມຂອງຊາດ.

**ມາດຕາ 2 ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ**

ຄວາມສະຫງົບແຫ່ງຊາດ ແມ່ນ ຄວາມມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ປອດໄພ ຍຸຕິທຳ, ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເຂັ້ມແຂງ.

ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ແມ່ນ ການຈັດຕັ້ງເຄື່ອນໄຫວ, ຊີ້ນໍາ ບັນຊາ, ຄຸ້ມຄອງ, ກວດກາ ແລະ ນໍາໃຊ້ຍຸດທະສາດ, ຍຸດທະວິທີ, ສິລະປະຍຸດ ຂອງກໍາລັງປະກອບອາວຸດປະຊາຊົນ ເຂົ້າໃນການສະກັດກັ້ນ, ຕອບໂຕ້ການທຸກກົນອຸບາຍ ຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄພຂົ່ມຂູ່ຕໍ່ຄວາມສະຫງົບແຫ່ງຊາດ** ໝາຍເຖິງ ບັນດາປັດໄຈທັງພາຍໃນ ຫຼື ພາຍນອກດິນແດນຂອງ ສປປ ລາວ ທີ່ສ້າງເງື່ອນໄຂໃຫ້ມີຄວາມສ່ຽງຕໍ່ຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
2. **ເປົ້າໝາຍປ້ອງກັນຄວາມສະຫງົບ** ໝາຍເຖິງ ລະບອບການເມືອງ, ເອກະລາດ, ອໍານາດອະທິປະໄຕ, ພື້ນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ, ແນວທາງ ນະໂຍບາຍຂອງລັດ, ອົງການຊີ້ນໍາ ນໍາພາ, ຜູ້ນໍາລັດຂັ້ນສູນກາງ, ທ້ອງຖິ່ນ, ແຂກຂັ້ນສູງຕ່າງປະເທດ, ພື້ນຖານເສດຖະກິດ, ວັດທະນະທໍາ-ສັງຄົມ, ຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດໍາລົງຊີວິດຢູ່ ສປປ ລາວ;
3. **ສະພາວະສຸກເສີນ** ໝາຍເຖິງ ສະພາບການ ຫຼື ສະຖານະການ ທີ່ເກີດຂຶ້ນໂດຍບໍ່ໄດ້ຄາດຄະເນລ່ວງໜ້າ ທີ່ພາໃຫ້ມີຄວາມບໍ່ສະຫງົບ ຊຶ່ງຕ້ອງໄດ້ຮີບຮ້ອນສຸມໃສ່ສະກັດກັ້ນ ແລະ ແກ້ໄຂຢ່າງຮີບດ່ວນ ເພື່ອໃຫ້ສະພາບການດັ່ງກ່າວຢຸດຕິລົງໃນທັນໃດ;
4. **ກໍາລັງປະກອບອາວຸດປະຊາຊົນ** ໝາຍເຖິງ ກໍາລັງປ້ອງກັນຊາດ ແລະ ກໍາລັງປ້ອງກັນຄວາມສະຫງົບ;
5. **ຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ** ໝາຍເຖິງ ການຈັດຕັ້ງໜຶ່ງທີ່ເຮັດໜ້າທີ່ຊີ້ນໍາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຊຶ່ງມີຢູ່ສູນກາງ ແລະ ແຂວງ, ນະຄອນ ໂດຍມີປະທານ ແລະ ຄະນະກໍາມະການ ຈາກຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ**

ລັດ ຖືເອົາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ເປັນສໍາຄັນ ແລະ ເອົາໃຈໃສ່ສ້າງກ້ອນກໍາລັງແຮງມະຫາສາມັກຄີໃຫ້ມີຄວາມເປັນເອກະພາບທົ່ວປວງຊົນລາວທັງຊາດ, ປະກອບສ່ວນເຂົ້າໃນ

ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຢ່າງຕັ້ງໜ້າ; ສ້າງ ແລະ ພັດທະນາກຳລັງປະກອບອາວຸດ ໃຫ້ມີຄວາມເຕີບໃຫຍ່ເຂັ້ມແຂງຮອບດ້ານ ທັງຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ.

ລັດ ເອົາໃຈໃສ່ ກໍ່ສ້າງພື້ນຖານໂຄງລ່າງ, ສະໜອງທີ່ດິນ, ງົບປະມານ, ພາຫະນະ, ວັດຖຸປະກອບ ເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝ ແລະ ອາວຸດຍຸດໂທປະກອນ ເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ.

### ມາດຕາ 5 ຫຼັກການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

ການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຢູ່ພາຍໃຕ້ການຊີ້ນຳ ນຳພາ, ເດັດຂາດ, ໂດຍກົງ ແລະ ຮອບດ້ານຂອງພັກປະຊາຊົນປະຕິວັດລາວ;
2. ເຄົາລົບ, ປະຕິບັດ ລັດຖະທຳມະນູນ, ລະບຽບກົດໝາຍ, ຮັກສາມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ນຳໃຊ້ຄວາມກ້າວໜ້າຂອງຍຸກສະໄໝ;
3. ກຳແໜ້ນທັດສະນະການປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ແລະ ການປຸກລະດົມກຳລັງແຮງສັງລວມຂອງທົ່ວປວງຊົນລາວເຂົ້າຮ່ວມໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;
4. ຮັບປະກັນການສົມທົບແໜ້ນ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບການສ້າງສາພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ, ການຕ່າງປະເທດ;
5. ສະກັດກັ້ນ, ຕ້ານການກໍ່ອາຊະຍາກຳ, ບຸກຄົນ ແລະ ກຸ່ມຄົນ ບໍ່ດີທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວລະເມີດລະບຽບກົດໝາຍ ຢ່າງທັນການ;
6. ຮັບປະກັນຄວາມລັບ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

### ມາດຕາ 6 ພັນທະຂອງພົນລະເມືອງລາວ ໃນການປ້ອງກັນຄວາມສະຫງົບແຫ່ງຊາດ

ການປ້ອງກັນຄວາມສະຫງົບແຫ່ງຊາດ ແມ່ນ ພັນທະຂອງພົນລະເມືອງລາວທັງຊາດ ເຂົ້າຮ່ວມຢ່າງຕັ້ງໜ້າໃນການແຈ້ງ ແລະ ລາຍງານຂໍ້ມູນ, ສະກັດກັ້ນ, ຕອບຕ້ານທຸກກົນອຸບາຍຂອງບຸກຄົນ, ກຸ່ມຄົນບໍ່ດີ ແລະ ການເຄື່ອນໄຫວທີ່ລ່ວງລະເມີດຄວາມສະຫງົບແຫ່ງຊາດ.

**ມາດຕາ 7 ການປົກປ້ອງການເຄື່ອນໄຫວຂອງກຳລັງປ້ອງກັນຄວາມສະຫງົບແຫ່ງຊາດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຮັດໜ້າທີ່ປ້ອງກັນຄວາມສະຫງົບແຫ່ງຊາດ ຈະໄດ້ຮັບການປົກປ້ອງ ແລະ ຄວາມເປັນທຳ ເມື່ອຖືກກ່າວຫາ, ຖືກຮ້ອງຟ້ອງ, ຖືກໃສ່ຮ້າຍປ້າຍສີ, ຖືກຂົ່ມຂູ່ ຫຼື ນາບຂູ່ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ທີ່ຖືກຕ້ອງ ຕາມລະບຽບກົດໝາຍ ຫຼື ຕາມການມອບໝາຍຂອງການຈັດຕັ້ງ.

**ມາດຕາ 8 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຮັດໜ້າທີ່ປ້ອງກັນຄວາມສະຫງົບແຫ່ງຊາດ ລວມທັງ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດທີ່ດຳລົງຊີວິດໃນ ສປປ ລາວ ເວັ້ນເສຍແຕ່ກົດໝາຍໄດ້ກຳນົດໄວ້ຕ່າງຫາກ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການສ້າງບຳລຸງ ຍົກລະດັບຄວາມຮູ້ທາງດ້ານວິຊາສະເພາະ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ, ປະຕິບັດຕາມສັນຍາສາກົນ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ບົນພື້ນຖານຫຼັກການເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ, ບໍ່ແຊກແຊງກິດຈະການພາຍໃນຊຶ່ງກັນ ແລະ ກັນ, ສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ລັດ ສົ່ງເສີມການພົວພັນຮ່ວມມືຮອບດ້ານ ກັບປະເທດເພື່ອນມິດຍຸດທະສາດ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ.

## ພາກທີ II
## ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

**ມາດຕາ 10 ຄວາມສຳຄັນຂອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ**

ການປ້ອງກັນຄວາມສະຫງົບແຫ່ງຊາດ ແມ່ນ ວຽກງານຍຸດທະສາດໜຶ່ງຂອງລັດ ທີ່ມີຄວາມສຳຄັນຕົ້ນຕໍ ໃນການຈັດຕັ້ງ, ເຄື່ອນໄຫວ, ນຳໃຊ້ມາດຕະການ, ຄຸ້ມຄອງ, ຕິດຕາມ, ກວດກາ, ປ້ອງກັນ, ສະກັດກັ້ນ, ຕອບຕ້ານທຸກກົນອຸບາຍຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ.

**ມາດຕາ 11 ການປ້ອງກັນຄວາມສະຫງົບແຫ່ງຊາດ**

ການປ້ອງກັນຄວາມສະຫງົບແຫ່ງຊາດ ປະກອບດ້ວຍ:

1. ການປ້ອງກັນຄວາມສະຫງົບທາງດ້ານການເມືອງ;
2. ການປ້ອງກັນຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ.

## ໝວດທີ 1
## ການປ້ອງກັນຄວາມສະຫງົບທາງດ້ານການເມືອງ

**ມາດຕາ 12 ການປ້ອງກັນຄວາມສະຫງົບ ທາງດ້ານການເມືອງ**

ການປ້ອງກັນຄວາມສະຫງົບທາງດ້ານການເມືອງ ແມ່ນ ການປົກປ້ອງເປົ້າໝາຍປ້ອງກັນຄວາມສະຫງົບ ລວມທັງ ພະນັກງານ-ລັດຖະກອນ, ນັກຮຽນ, ນັກສຶກສາ, ປະຊາຊົນ ແລະ ຜູ້ອອກແຮງງານທີ່ເຄື່ອນໄຫວປະຕິບັດໜ້າທີ່ຢູ່ພາຍໃນ ແລະ ຕ່າງປະເທດ ທັງແມ່ນການຊອກຄົ້ນຫາ, ສະກັດກັ້ນ, ຕອບຕ້ານການເຄື່ອນໄຫວຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ.

**ມາດຕາ 13 ການກະທຳຜິດຕໍ່ຄວາມສະຫງົບທາງດ້ານການເມືອງ**

ການກະທຳຜິດຕໍ່ຄວາມສະຫງົບທາງດ້ານການເມືອງ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາ ມີດັ່ງນີ້:

1. ການທໍລະຍົດຕໍ່ຊາດ, ການກະບົດ, ການເປັນນັກສືບສອດແນມ, ການທຳລາຍ, ການໝິ່ນປະໝາດເຄື່ອງໝາຍປະເທດ ຫຼື ທຸງຊາດ;
2. ການລ່ວງລະເມີດດິນແດນ, ການທຳລາຍ ຫຼື ເຄື່ອນຍ້າຍຫຼັກໝາຍຊາຍແດນ;
3. ການປອງຮ້າຍ, ການທຳລາຍມໍລະດົກ ເພື່ອທຳລາຍມັງເຫັດຈະການຂອງລັດ, ຂອງສັງຄົມ, ການບຸກລຸກຄ້າຍຄຸມຂັງ-ດັດສ້າງ, ການເປີດເຜີຍຄວາມລັບຂອງລັດ;
4. ການເຕົ້າໂຮມກຸ່ມຄົນ ເພື່ອສ້າງຄວາມປັ່ນປ່ວນ, ການໂຄສະນາຕ້ານ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ແລະ ການແບ່ງແຍກຄວາມສາມັກຄີ;
5. ການໂຈລະກຳ, ການລັກ, ການຍັກຍອກ, ການປຸ້ນເອົາອາວຸດເສິກ ຫຼື ວັດຖຸລະເບີດ, ການເຮັດໃຫ້ອາວຸດເສິກ ຫຼື ວັດຖຸລະເບີດຂອງລັດ, ຂອງລວມໝູ່ເສັຍຫາຍ, ການຜະລິດ, ການຊື້ຂາຍ, ການມີໄວ້ໃນຄອບຄອງ ແລະ ການໃຊ້ອາວຸດເສິກ ຫຼື ວັດຖຸລະເບີດໂດຍບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;

6. ການໂຕນໜີໄປຫາສັດຕູ, ການລ້ຽງດູບຸກຄົນທີ່ເຄື່ອນໄຫວຕ້ານການປະຕິວັດ;

7. ການຂົນຂວາຍສົ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດຢ່າງຜິດກົດໝາຍ;

8. ການນຳໃຊ້, ເຜີຍແຜ່, ການຜະລິດ, ການມີໄວ້ໃນຄອບຄອງເຄື່ອງວິທະຍຸສື່ສານ ແລະ ການນຳໃຊ້ຄື້ນຄວາມຖີ່ວິທະຍຸສື່ສານ ແລະ ເຄື່ອງເອເລັກໂຕຣນິກ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ການກະທຳຜິດກ່ຽວກັບອາວຸດເຄມີ, ການຄົ້ນຄວ້າ, ນຳໃຊ້ວິທະຍາສາດ-ເທັກໂນໂລຊີ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

9. ການກະທຳຜິດທີ່ເປັນອັນຕະລາຍຕໍ່ຄວາມປອດໄພຂອງເຮືອ, ເຮືອບິນ, ກຳປັ່ນ, ລົດ, ການລະເມີດຄວາມປອດໄພທາງອາກາດ, ສະໜາມບິນ, ທ່າກຳປັ່ນ, ສະຖານີລົດ;

10. ການກະທຳຜິດອື່ນ ທີ່ແຕະຕ້ອງເຖິງຄວາມສະຫງົບທາງດ້ານການເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ.

## ໝວດທີ 2

## ການປ້ອງກັນຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ

### ມາດຕາ 14 ການປ້ອງກັນຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ

ການປ້ອງກັນຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ ແມ່ນ ການສະກັດກັ້ນ, ຕ້ານການກໍ່ອາຊະຍາກຳ, ກໍ່ຄວາມປັ່ນປ່ວນທາງດ້ານພື້ນຖານເສດຖະກິດຂອງລັດ, ລວມໝູ່, ເອກະເທດ, ເອກະຊົນ, ປາກົດການຫຍໍ້ທໍ້ຂອງສັງຄົມ, ການປົກປ້ອງແນວຄິດວັດທະນະທຳ, ປົກປັກຮັກສາສິ່ງແວດລ້ອມ, ວັດຖຸບູຮານ, ບູຮານະສະຖານ, ມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ຂອງເຜົ່າ, ສາດສະໜາ ແລະ ປ້ອງກັນຊີວິດ, ສຸຂະພາບ, ກຽດສັກສີ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດຢູ່ ສປປ ລາວ ລວມທັງ ການສະກັດກັ້ນ, ຕ້ານການມ້າງເພທຳລາຍຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີໃນການເບື່ອເມົາຊາວໜຸ່ມ, ນັກຮຽນ,ນັກສຶກສາທີ່ເປັນໜໍ່ແໜງຂອງຊາດ, ການແຊກຊຶມທາງດ້ານວັດທະນະທຳທີ່ບໍ່ສອດຄ່ອງ ແລະ ຂັດກັບວັດທະນະທຳຮີດຄອງປະເພນີອັນດີງາມຂອງຊາດ.

### ມາດຕາ 15 ການກະທຳຜິດຕໍ່ຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ

ການກະທຳຜິດຕໍ່ຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາ ມີ ດັ່ງນີ້ :

1. ການກະທຳຜິດຕໍ່ເສດຖະກິດ, ການທຳລາຍປ່າໄມ້;

2. ການຟອກເງິນ, ການປອມແປງເງິນ ຫຼື ການໃຊ້ເງິນປອມ, ການປອມແປງເຊັກ, ການໃຊ້ເຊັກ ຫຼື ພັນທະບັດອື່ນທຸກຮູບການ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

3. ການລະເມີດລະບຽບການ ກ່ຽວກັບລະບອບພາສີອາກອນຂອງລັດ;

4. ການກະທຳຜິດຕໍ່ກຳມະສິດຂອງລັດ ຫຼື ລວມໝູ່;

5. ການກະທຳຜິດຕໍ່ລະບຽບການບໍລິຫານ ແລະ ການຍຸຕິທຳ;

6. ການກະທຳຜິດຕໍ່ສິດ ແລະ ເສລີພາບຂອງພົນລະເມືອງ;

7. ການກະທຳຜິດຕໍ່ກຳມະສິດສ່ວນຕົວຂອງພົນລະເມືອງ;

8. ການກະທຳຜິດຕໍ່ສາຍພົວພັນຜົວເມຍ, ຄອບຄົວ ແລະ ຮີດຄອງປະເພນີ;

9. ການກະທຳຜິດຕໍ່ຊີວິດ, ສຸຂະພາບ ແລະ ກຽດສັກສີຂອງບຸກຄົນ;

10. ການລັກ, ການຊຸ້ມຈີ້, ການຊິງຊັບ, ການເປັນແພດເຖື່ອນ, ການຫຼິ້ນການພະນັນທີ່ຕ້ອງຫ້າມ ແລະ ການເປັນນັກເລງອັນທະພານ;

11. ການລະເມີດກົດຈະລາຈອນ ທີ່ພາໃຫ້ເກີດອຸປະຕິເຫດ, ການກະທຳຜິດຕໍ່ຄວາມປອດໄພຂອງການຈະລາຈອນ ແລະ ການຫຼົບໜີຈາກອຸປະຕິເຫດ;

12. ການກໍ່ອາຊະຍາກຳທາງດ້ານຄອມພິວເຕີ ແລະ ການໃຊ້ສື່ເອເລັກໂຕຣນິກໃສ່ຮ້າຍປ້າຍສີໂຈມຕີຜູ້ອື່ນເຮັດໃຫ້ເສຍກຽດສັກສີ;

13. ການທຳອະນາຈານ, ການເຜີຍແຜ່ສິ່ງລາມົກ ແລະ ສິ່ງທີ່ຂັດກັບວັດທະນະທຳຂອງຊາດ;

14. ການຜະລິດ, ຂົນສົ່ງ, ເຄື່ອນຍ້າຍ, ຄ້າຂາຍ, ເສບ ແລະ ມີຢາເສບຕິດໄວ້ໃນຄອບຄອງ;

15. ການຄ້າມະນຸດ,ການເປັນໂສເພນີ, ການຄ້າໂສເພນີ, ການຂົ່ມຂືນທຳຊຳເລົາ, ການບັງຄັບໃຫ້ເປັນໂສເພນີ;

16. ການລັກພາຕົວ, ການຈັບເປັນຕົວປະກັນ, ການບັງຄັບ;

17. ການກະທຳຜິດອື່ນ ທີ່ແຕະຕ້ອງເຖິງຄວາມສະຫງົບທາງດ້ານເສດຖະກິດ ແລະ ສັງຄົມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ.

# ພາກທີ III
# ມາດຕະການການປ້ອງກັນຄວາມສະຫງົບແຫ່ງຊາດ
## ໝວດທີ 1
## ວິທີການປ້ອງກັນຄວາມສະຫງົບແຫ່ງຊາດ

**ມາດຕາ 16 ໜ້າທີ່ລວມ ໃນການປ້ອງກັນຄວາມສະຫງົບແຫ່ງຊາດ**

ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ເປັນໜ້າທີ່ລວມຂອງທົ່ວປວງຊົນ, ເປັນພັນທະຂອງພົນລະເມືອງທຸກຄົນ ໂດຍມີກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນຫຼັກແຫຼ່ງ ດັ່ງນີ້:

1. ປ້ອງກັນ ລະບອບການເມືອງ, ຄວາມເປັນເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ລວມທັງ ເຂດນ່ານນ້ຳ ແລະ ນ່ານຟ້າ ຂອງປະເທດຊາດ;

2. ປ້ອງກັນ ເປົ້າໝາຍປ້ອງກັນຄວາມສະຫງົບ, ຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ;

3. ປ້ອງກັນຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳຂອງພົນລະເມືອງລາວ ຕໍ່ການປົກປັກຮັກສາລະບອບປະຊາທິປະໄຕ ປະຊາຊົນ ແລະ ຄວາມສາມັກຄີທົ່ວປວງຊົນລາວທັງຊາດ;

4. ປ້ອງກັນຄວາມສະຫງົບໃນຂົງເຂດເສດຖະກິດ, ວັດທະນະທຳ-ສັງຄົມ, ວິທະຍາສາດ ແລະ ເຕັກໂນໂລຊີ, ສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ, ມໍລະດົກຂອງຊາດ, ເຂດສະຫງວນ, ເຂດຫວງຫ້າມ, ເຂດທີ່ພົ້ນປະຕິວັດ ແລະ ເຂດທີ່ມີຄວາມສຳຄັນອື່ນຂອງຊາດ;

5. ສະກັດກັ້ນ, ຕອບໂຕ້ ທຸກກົນອຸບາຍ ການເຄື່ອນໄຫວທີ່ລ່ວງລະເມີດຄວາມສະຫງົບແຫ່ງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

6. ສ້າງທ່າສະໜາມປ້ອງກັນຄວາມສະຫງົບແຫ່ງຊາດ ທົ່ວປວງຊົນຮອບດ້ານ ໃຫ້ເຕີບໃຫຍ່, ໜັກແໜ້ນ ເຂັ້ມແຂງ ແລະ ທັນສະໄໝ.

**ມາດຕາ 17 ພື້ນທີ່ປ້ອງກັນຄວາມສະຫງົບແຫ່ງຊາດ**

ການປ້ອງກັນຄວາມສະຫງົບແຫ່ງຊາດ ມີ ພື້ນທີ່ຕົ້ນຕໍ ດັ່ງນີ້:

1. ຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ;

2. ພື້ນທີ່ສຳຄັນທາງດ້ານການເມືອງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ;

3. ພື້ນທີ່ຂອງສຳນັກງານ, ອົງການຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສຳນັກງານຜູ້ຕາງໜ້າຂອງຕ່າງປະເທດ, ສະຖານທູດ ແລະ ກົງສູນ;

4. ພື້ນທີ່ຍຸດທະສາດ ສຳຄັນ, ເປັນຄວາມລັບຂອງຊາດ, ເຂດສະຫງວນ ແລະ ເຂດຫວງຫ້າມ;

5. ພື້ນທີ່ ລຽບຕາມຊາຍແດນ, ມີຄວາມສັບສົນຫຼໍ່ແຫຼມ ແລະ ມີປາກົດການຫຍໍ້ທໍ້ໃນສັງຄົມ.

**ມາດຕາ 18 ວິທີການພື້ນຖານໃນການປ້ອງກັນຄວາມສະຫງົບແຫ່ງຊາດ**

ໃນການປ້ອງກັນຄວາມສະຫງົບແຫ່ງຊາດ ມີ ວິທີການພື້ນຖານ ດັ່ງນີ້:

1. ວິທີການມະຫາຊົນ;
2. ວິທີການຄຸ້ມຄອງບໍລິຫານ;
3. ວິທີການວິຊາສະເພາະ;
4. ວິທີການເຕັກນິກ-ເຕັກໂນໂລຊີ;
5. ວິທີການປະກອບອາວຸດ.

ວິທີການມະຫາຊົນ ເປັນວິທີການພື້ນຖານກວ່າໝູ່. ສຳລັບການນຳໃຊ້ວິທີການພື້ນຖານ ໃນການແກ້ໄຂບັນຫາ ອາດຈະນຳໃຊ້ວິທີການໃດໜຶ່ງ ຫຼື ຫຼາຍວິທີການກໍໄດ້ ໂດຍຂຶ້ນກັບແຕ່ລະເປົ້າໝາຍ, ພື້ນທີ່ ແລະ ເວລານຳໃຊ້.

**ມາດຕາ 19 ການກຳນົດພື້ນທີ່ ແລະ ການປະກາດສະພາວະສຸກເສີນ**

ກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ເປັນຜູ້ກຳສະພາບ, ກຳນົດພື້ນທີ່ທີ່ເປັນອັນຕະລາຍ ແລະ ເຂດທີ່ມີເຫດການບໍ່ສະຫງົບເກີດຂຶ້ນ ຢູ່ແຕ່ລະພື້ນທີ່ທົ່ວປະເທດ ຫຼື ໃນທ້ອງຖິ່ນໃດໜຶ່ງ ແລ້ວລາຍງານຕໍ່ນາຍົກລັດຖະມົນຕີ ຫຼື ປະທານປະເທດ ເພື່ອພິຈາລະນາປະກາດສະພາວະສຸກເສີນ.

**ມາດຕາ 20 ການປ້ອງກັນຄວາມສະຫງົບ ໃນສະພາວະສຸກເສີນ**

ການປ້ອງກັນຄວາມສະຫງົບໃນສະພາວະສຸກເສີນ ໃຫ້ປະຕິບັດ ດັ່ງນີ້:

1. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ຕ້ອງລາຍງານເຫດການສຸກເສີນ ແລະ ການແກ້ໄຂຢ່າງຮີບດ່ວນໃຫ້ນາຍົກລັດຖະມົນຕີ ຫຼື ປະທານປະເທດ ເພື່ອຊີ້ທິດຊີ້ນຳໃນການແກ້ໄຂຢ່າງທັນການ;

2. ຄະນະກຳມະການບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ກຳລັງປ້ອງກັນຄວາມສະຫງົບບ້ານ ຕ້ອງລະດົມກຳລັງພົນເຂົ້າປ້ອງກັນ, ສະກັດກັ້ນ, ຄວບຄຸມສະຖານະການ ພ້ອມທັງລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ລາຍງານຕໍ່ ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ເພື່ອແກ້ໄຂຢ່າງທັນການ;

3. ກຳລັງປ້ອງກັນຄວາມສະຫງົບ ຕ້ອງລະດົມກຳລັງພົນທຸກຫົວໜ່ວຍ ເຂົ້າໃນການປ້ອງກັນ, ສະກັດກັ້ນ, ຕອບໂຕ້ ທຸກເຫດການທີ່ເກີດຂຶ້ນຢ່າງທັນການ ດ້ວຍສິລະປະຍຸດ ແລະ ຍຸດທະວິທີ ເພື່ອເຮັດໃຫ້ສະພາບການດັ່ງກ່າວ ສະຫງົບລົງໃນທັນໃດ;

4. ກະຊວງ, ອົງການຈັດຕັ້ງຕ່າງໆ ທັງພາກລັດ, ເອກະຊົນ, ຄອບຄົວ ແລະ ບຸກຄົນ ເມື່ອໄດ້ຮັບການຮ້ອງຂໍຈາກກຳລັງປ້ອງກັນຄວາມສະຫງົບແຫ່ງຊາດ ຕ້ອງໃຫ້ການຊ່ວຍເຫຼືອ ແລະ ປະກອບສ່ວນເຂົ້າໃນການເຄື່ອນໄຫວຢ່າງຕັ້ງໜ້າ;

5. ຍົກຍ້າຍ ພົນລະເມືອງ ຫຼື ຊັບສິນທີ່ຈຳເປັນ ອອກຈາກເຂດທີ່ມີຄວາມສັບສົນ, ເປັນອັນຕະລາຍ ຫຼື ບໍ່ສະຫງົບ ທີ່ເຫັນວ່າມີຄວາມສ່ຽງຕໍ່ຊີວິດ ແລະ ຊັບສິນຂອງລັດ ໄປຢູ່ບ່ອນທີ່ມີຄວາມປອດໄພ.

ໃນກໍລະນີເກີດສະພາວະສຸກເສີນທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ໃຫ້ປະຕິບັດຕາມລັດຖະທຳມະນູນ ແລະ ລະບຽບກົດໝາຍ.

**ມາດຕາ 21 ການນຳໃຊ້ມາດຕະການທີ່ຈຳເປັນໃນສະພາວະສຸກເສີນ**

ໃນສະພາວະສຸກເສີນ ກະຊວງປ້ອງກັນຄວາມສະຫງົບ ນຳໃຊ້ມາດຕະການທີ່ຈຳເປັນ ດັ່ງນີ້:

1. ອອກແຈ້ງການ, ຄຳສັ່ງ ຢ່າງຮີບດ່ວນ ກ່ຽວກັບການປ້ອງກັນຄວາມສະຫງົບ;

2. ວ່ອງໄວເຂົ້າຍຶດພື້ນທີ່ ແລະ ເພີ່ມທະວີການປ້ອງກັນພື້ນທີ່ປ້ອງກັນຄວາມສະຫງົບ ແລະ ຍົກລະດັບການຮັກສາຄວາມສະຫງົບປອດໄພໃຫ້ແກ່ເປົ້າໝາຍປ້ອງກັນຄວາມສະຫງົບແຫ່ງຊາດ;

3. ຈັດວາງກຳລັງປ້ອງກັນ, ເວນຍາມ ເປົ້າໝາຍ, ພື້ນທີ່ປ້ອງກັນຄວາມສະຫງົບ, ກວດກາບຸກຄົນ ແລະ ພາຫະນະ ເພື່ອຈຳກັດການເຄື່ອນໄຫວເຂົ້າ-ອອກຢ່າງເຂັ້ມງວດ;

4. ກວດກາເປັນພິເສດ ຢູ່ບັນດາດ່ານ, ພາຫະນະຂົນສົ່ງທາງບົກ, ທາງນ້ຳ ແລະ ທາງອາກາດ ຢ່າງເຂັ້ມງວດ;

5. ຈຳກັດ ຫຼື ໂຈະການຂົນສົ່ງ, ເຄື່ອນຍ້າຍ, ນຳໃຊ້ວັດຖຸໄວໄຟ, ທາດເຄມີທີ່ເປັນອັນຕະລາຍ, ທາດລະເບີດຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງສຳນັກງານ, ອົງການຈັດຕັ້ງ ແລະ ບຸກຄົນ;

6. ກວດກາຢ່າງເຂັ້ມງວດ ການຂົນສົ່ງ, ເຄື່ອນຍ້າຍ, ນຳໃຊ້ ຫຼື ມີໄວ້ໃນຄອບຄອງອາວຸດທຸກຊະນິດ ໂດຍບໍ່ໄດ້ຮັບອະນຸຍາດ;

7. ຈຳກັດ ຫຼື ໂຈະການເຄື່ອນໄຫວ ກິດຈະການຂອງຫົວໜ່ວຍທຸລະກິດ, ການບໍລິການ, ສະຖານທີ່ສາທາລະນະ, ຊຸມຊົນ ທີ່ເຫັນວ່າເປັນສາເຫດກໍ່ໃຫ້ເກີດຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ;

8. ສະກັດກັ້ນ ຫຼື ຈຳກັດ ການໂຮມຊຸມນຸມ ແລະ ບັນດາການເຄື່ອນໄຫວຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ;

9. ງົດ ຫຼື ໂຈະການນຳໃຊ້ເຄື່ອງມື, ລະບົບສື່ສານຢູ່ໃນຂອບເຂດພື້ນທີ່ ໃນກໍລະນີທີ່ມີຄວາມຈຳເປັນ;

10. ຈຳກັດ, ຄວບຄຸມຢູ່ກັບທີ່ ຫຼື ນຳຕົວ ຜູ້ກໍ່ຄວາມບໍ່ສະຫງົບ ອອກຈາກພື້ນທີ່ປ້ອງກັນຄວາມສະຫງົບ;

11. ປຸກລະດົມປວງຊົນ ປະກອບສ່ວນທາງດ້ານກຳລັງແຮງ, ວັດຖຸ ແລະ ຂໍ້ມູນ ເຂົ້າໃນວຽກງານປ້ອງກັນຄວາມສະຫງົບ;

12. ປະສານສົມທົບ ກັບກຳລັງປ້ອງກັນຊາດ, ບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງໃນການເຮັດໜ້າທີ່ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

## ມາດຕາ 22 ການນຳໃຊ້ອາວຸດສະກັດກັ້ນ

ການນຳໃຊ້ອາວຸດສະກັດກັ້ນ ແມ່ນ ອະນຸຍາດໃນກໍລະນີທີ່ຜູ້ກະທຳຜິດ ມີ ການກະທຳ ດັ່ງນີ້:

1. ໃຊ້ຄວາມຮຸນແຮງ, ໃຊ້ອາວຸດ, ວັດຖຸລະເບີດ ທີ່ມີລັກສະນະນາບຂູ່ ໂດຍທົ່ງຕໍ່ຊີວິດ, ສຸຂະພາບຂອງພົນລະເມືອງ ຫຼື ຜູ້ປະຕິບັດໜ້າທີ່ ແລະ ມີການຕໍ່ສູ້ ຍາດຊິງອາວຸດກັບເຈົ້າໜ້າທີ່;

2. ນຳໃຊ້ອາວຸດ, ວັດຖຸລະເບີດນາບຂູ່ ຫຼື ຈູ່ໂຈມ ຕໍ່ຄວາມປອດໄພຂອງເປົ້າໝາຍແລະພື້ນທີ່ປ້ອງກັນຄວາມສະຫງົບ;

3. ນຳໃຊ້ອາວຸດກໍ່ຄວາມວຸ້ນວາຍຕໍ່ມວນຊົນ ແລະ ສາທາລະນະ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍຢ່າງຮ້າຍແຮງ;

4. ພວມຈູ່ໂຈມ ຊິງຕົວນັກໂທດ, ຕົວປະກັນ ແລະ ນັກໂທດກະທຳຜິດຢ່າງຮ້າຍແຮງ ເຊັ່ນ ໂຕນໜີ, ຕ້ານຄືນ;

5. ປິ່ງລັບ ຜູ້ນຳໃຊ້ ຫຼື ນຳໃຊ້ ພາຫະນະຄົມມະນາຄົມ ທາງບົກ, ທາງນ້ຳ, ທາງອາກາດ ທີ່ກຳລັງຈູ່ໂຈມ ຫຼື ບຸກລຸກໂດຍກົງຢ່າງຮ້າຍແຮງຕໍ່ຄວາມສະຫງົບຂອງຊາດ, ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ, ຊີວິດ, ຊັບສິນ ແລະ ສຸຂະພາບຂອງເຈົ້າໜ້າທີ່ ທີ່ພວມປະຕິບັດງານ ຫຼື ບຸກຄົນອື່ນ.

## ມາດຕາ 23 ຄວາມຮັບຜິດຊອບໃນການນຳໃຊ້ອາວຸດ

ການນຳໃຊ້ອາວຸດ ຂອງເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ໃນການສະກັດກັ້ນຜູ້ກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍສະບັບນີ້ ທີ່ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບກົດໝາຍ ຈະບໍ່ມີຄວາມຮັບຜິດຊອບຕໍ່ຜົນເສຍຫາຍໃນການນຳໃຊ້ອາວຸດນັ້ນແຕ່ຢ່າງໃດ ເວັ້ນເສຍແຕ່ການນຳໃຊ້ອາວຸດສະກັດກັ້ນ ຫາກມີຜົນເສຍຫາຍເຖິງຊີວິດ, ສຸຂະພາບ ແລະ ຊັບສິນຂອງພົນລະເມືອງທີ່ບໍລິສຸດເທົ່ານັ້ນ.

## ມາດຕາ 24 ການເກັບຮັກສາເອກະສານວິຊາສະເພາະ ແລະ ເຕັກນິກ-ຂໍ້ມູນຂ່າວສານ

ບັນດາເອກະສານວິຊາສະເພາະ ແລະ ເຕັກນິກ-ຂໍ້ມູນຂ່າວສານ ທີ່ກ່ຽວພັນກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ທີ່ເປັນຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການນັ້ນ ສຳນັກງານ, ອົງການຈັດຕັ້ງຂອງທຸກພາກສ່ວນ ຕ້ອງຄຸ້ມຄອງ, ຮັກສາຕາມລະບຽບການ, ສຳເນົາ ແລະ ຈັດສົ່ງເອກະສານ ໃຫ້ຂະແໜງການປ້ອງກັນຄວາມສະຫງົບເກັບຮັກສາໄວ້.

# ໝວດທີ 2

# ການຊີ້ນຳ, ບັນຊາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

## ມາດຕາ 25 ຜູ້ຊີ້ນຳ, ບັນຊາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

ຜູ້ຊີ້ນຳ, ບັນຊາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ມີ ດັ່ງນີ້:

1. ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ, ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ ເປັນຜູ້ຊີ້ນຳ, ບັນຊາໂດຍກົງ ໃນການຈັດຕັ້ງ, ຄຸ້ມຄອງ, ຕິດຕາມ, ກວດກາກົມກອງຂັ້ນສູນກາງ ແລະ ທ້ອງຖິ່ນ;

2. ຄະນະບັນຊາ ບັນດາເຫຼົ່າຮົບວິຊາສະເພາະ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ເປັນຜູ້ຊີ້ນຳ, ບັນຊາ, ຄຸ້ມຄອງ, ຈັດຕັ້ງປະຕິບັດ, ຕິດຕາມ, ກວດກາຕົວຈິງໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 26 ຜູ້ຊີ້ນຳ,ບັນຊາວຽກງານປ້ອງກັນຄວາມສະຫງົບ ຢູ່ ແຂວງ, ນະຄອນ**

ຜູ້ຊີ້ນຳ ບັນຊາວຽກງານປ້ອງກັນຄວາມສະຫງົບ ຢູ່ ແຂວງ, ນະຄອນ ມີ ດັ່ງນີ້:

1. ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ, ກອງບັນຊາການທະຫານ ແຂວງ, ນະຄອນ ເປັນຜູ້ຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາກຳລັງ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄະນະບັນຊາຂອງບັນດາເຫຼົ່າຮົບວິຊາສະເພາະ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ແລະ ກອງບັນຊາການທະຫານ ແຂວງ, ນະຄອນ ເປັນຜູ້ຊີ້ນຳ, ນຳພາ, ບັນຊາກຳລັງພົນ ແລະ ຈັດຕັ້ງປະຕິບັດວຽກງານວິຊາສະເພາະຂອງຕົນ.

**ມາດຕາ 27 ຜູ້ຊີ້ນຳ,ບັນຊາວຽກງານປ້ອງກັນຄວາມສະຫງົບ ຢູ່ ເມືອງ, ເທດສະບານ**

ຜູ້ຊີ້ນຳ ບັນຊາວຽກງານປ້ອງກັນຄວາມສະຫງົບ ຢູ່ ເມືອງ, ເທດສະບານ ມີ ດັ່ງນີ້:

1. ຫົວໜ້າ ແລະ ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ, ກອງບັນຊາການທະຫານ ເມືອງ, ເທດສະບານ ເປັນຜູ້ຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຄະນະບັນຊາຂອງບັນດາເຫຼົ່າຮົບວິຊາສະເພາະ ທີ່ຂຶ້ນກັບກອງບັນຊາການປ້ອງກັນຄວາມສະຫງົບ ແລະ ກອງບັນຊາການທະຫານ ເມືອງ, ເທດສະບານ ເປັນຜູ້ຊີ້ນຳ ບັນຊາ, ຈັດຕັ້ງຜັນຂະຫຍາຍ ແລະ ປະຕິບັດທິດຊີ້ນຳຂອງຂັ້ນເທິງເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານປ້ອງກັນຄວາມສະຫງົບ ໃຫ້ປາກົດຜົນເປັນຈິງ.

**ມາດຕາ 28 ຜູ້ຊີ້ນຳ,ບັນຊາວຽກງານປ້ອງກັນຄວາມສະຫງົບ ຢູ່ບ້ານ**

ຫົວໜ້າ ແລະ ຮອງຫົວໜ້າປ້ອງກັນຄວາມສະຫງົບບ້ານ, ກອງຫຼອນບ້ານ ເປັນຜູ້ຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບຢູ່ໃນຂອບເຂດບ້ານຂອງຕົນ.

## ໝວດທີ 3
## ການຮັບປະກັນການເຄື່ອນໄຫວເຮັດໜ້າທີ່ປ້ອງກັນຄວາມສະຫງົບແຫ່ງຊາດ

### ມາດຕາ 29 ການສະໜອງອາວຸດຍຸດໂທປະກອນ, ພາຫະນະ, ເຕັກນິກວິຊາສະເພາະ

ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງປ້ອງກັນປະເທດ ເປັນຜູ້ຄົ້ນຄວ້າ, ສ້າງແຜນການ, ປະກອບເຄື່ອງແບບ, ເຄື່ອງໝາຍຍົດ, ເຄື່ອງໝາຍເຫຼົ່າຮົບ, ການຈັດຊື້ພາຫະນະ, ວັດຖຸປະກອນ, ເຕັກນິກ-ຂໍ້ມູນຂ່າວສານ, ອາວຸດຍຸດໂທປະກອນ ແລະ ລະບົບສື່ສານທີ່ທັນສະໄໝ ຕາມຄວາມຮັບຜິດຊອບຂອງຕົນ ແລ້ວນຳສະເໜີລັດຖະບານພິຈາລະນາ.

ລັດ ສະໜອງເຄື່ອງແບບ, ເຄື່ອງໝາຍຍົດ, ເຄື່ອງໝາຍເຫຼົ່າຮົບ, ພາຫະນະ, ວັດຖຸປະກອນ, ເຕັກນິກ-ຂໍ້ມູນຂ່າວສານ, ອາວຸດຍຸດໂທປະກອນ ແລະ ລະບົບສື່ສານທີ່ທັນສະໄໝເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນການເຄື່ອນໄຫວປະຕິບັດໜ້າທີ່ຂອງກຳລັງປະກອບອາວຸດ.

### ມາດຕາ 30 ການສະໜອງງົບປະມານ ແລະ ທີ່ດິນ

ລັດ ສະໜອງງົບປະມານ ເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ເພື່ອຮັບປະກັນການກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງ, ພັດທະນາວຽກງານ ແລະ ກຳລັງວິຊາສະເພາະ ໃຫ້ເຕີບໃຫຍ່ເຂັ້ມແຂງຮອບດ້ານ.

ງົບປະມານຮັບໃຊ້ເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ໄດ້ມາຈາກງົບປະມານແຫ່ງລັດ, ການປະກອບສ່ວນຂອງບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ການດຳເນີນກິດຈະການ, ການສ້າງພະລາທິການກັບທີ່ ຂອງກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງປ້ອງກັນປະເທດ ຕາມລະບຽບກົດໝາຍ.

ລັດ ສະໜອງ ແລະ ສະຫງວນທີ່ດິນ ໃຫ້ແກ່ການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ.

# ພາກທີ IV

# ກຳລັງປ້ອງກັນຄວາມສະຫງົບແຫ່ງຊາດ

**ມາດຕາ 31 ກຳລັງປ້ອງກັນຄວາມສະຫງົບແຫ່ງຊາດ**

ກຳລັງປ້ອງກັນຄວາມສະຫງົບແຫ່ງຊາດ ປະກອບດ້ວຍ:

1. ກຳລັງປ້ອງກັນຄວາມສະຫງົບອາຊີບ;
2. ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ;
3. ຜູ້ປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ.

**ມາດຕາ 32 ກຳລັງປ້ອງກັນຄວາມສະຫງົບອາຊີບ**

ກຳລັງປ້ອງກັນຄວາມສະຫງົບອາຊີບ ແມ່ນ ບັນດາເຫຼົ່າຊົນວິຊາສະເພາະໃນກຳລັງປະກອບອາວຸດປະຊາຊົນ ທີ່ໄດ້ຮັບການສ້າງ, ບຳລຸງເຕັກນິກວິຊາສະເພາະຢ່າງເປັນລະບົບ, ຄົບຖ້ວນ ແລະ ຖືກບັນຈຸເຂົ້າໃນກົງຈັກການຈັດຕັ້ງຂອງຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການປ້ອງກັນປະເທດ.

ສຳລັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງບັນດາເຫຼົ່າຊົນວິຊາສະເພາະ ທີ່ຂຶ້ນກັບຂະແໜງການປ້ອງກັນປະເທດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 33 ທີ່ຕັ້ງ ແລະ ພາລະບົດບາດ ຂອງເຫຼົ່າຊົນວິຊາສະເພາະ**

ເຫຼົ່າຊົນວິຊາສະເພາະ ແມ່ນ ບັນດາກົມກອງວິຊາສະເພາະປ້ອງກັນຄວາມສະຫງົບ ທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ທີ່ຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ, ມີພາລະບົດບາດເປັນເສນາທິການ ໃຫ້ຂະແໜງການປ້ອງກັນຄວາມສະຫງົບ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງເຫຼົ່າຊົນວິຊາສະເພາະ**

ເຫຼົ່າຊົນວິຊາສະເພາະ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ຍຸດທະວິທີ ໃນການສະກັດກັ້ນ, ຕ້ານການລະເມີດຕໍ່ ຄວາມສະຫງົບທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

2. ປ້ອງກັນຄວາມສະຫງົບ ຢູ່ຕາມເຂດຊາຍແດນລະຫວ່າງປະເທດ, ແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ບ້ານ;

3. ຊີ້ນຳ ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວປະຕິບັດໜ້າທີ່ ຂອງກຳລັງເຄິ່ງອາຊີບ ແລະ ຜູ້ປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

4. ເກັບກຳຂໍ້ມູນກ່ຽວກັບການເຄື່ອນໄຫວບັນຊີ, ແຫຼ່ງທີ່ມາຂອງເງິນ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ ແລະ ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

5. ກວດກາພາຫະນະຂົນສົ່ງ, ເຄື່ອງມືສື່ສານ, ເຄືອຂ່າຍລະບົບເຕັກນິກ-ຂໍ້ມູນຂ່າວສານ, ເອກະສານ, ສິນຄ້າ, ເຄື່ອງຫຸ້ມຫໍ່, ສະຖານທີ່ໃດໜຶ່ງ ເມື່ອມີຫຼັກຖານຢັ້ງຢືນວ່າມີສ່ວນກ່ຽວພັນກັບການລະເມີດລະບຽບກົດໝາຍ;

6. ໂຈະ ຫຼື ງົດ ການນຳໃຊ້ບັນດາພາຫະນະຂົນສົ່ງພາຍໃນ ແລະ ຕ່າງປະເທດ, ເຄື່ອງມື, ອຸປະກອນຕິດຕໍ່ສື່ສານ ຫຼື ສື່ມວນຊົນອື່ນ ທີ່ແຕະຕ້ອງເຖິງຄວາມສະຫງົບຂອງຊາດ;

7. ນຳໃຊ້ບັນດາເຄື່ອງມືສື່ສານ, ພາຫະນະຂົນສົ່ງ, ພາຫະນະອື່ນ ທີ່ເປັນຂອງລັດ, ເອກະຊົນ ແລະ ບຸກຄົນ ເຂົ້າໃນການປະຕິບັດໜ້າທີ່ປ້ອງກັນຄວາມສະຫງົບແຫ່ງຊາດ ໃນກໍລະນີຮີບດ່ວນ ແລະ ສຸກເສີນ ເພື່ອສະກັດກັ້ນຜົນເສຍຫາຍທີ່ຈະເກີດຂຶ້ນຕໍ່ສັງຄົມ ຫຼື ໄພອັນຕະລາຍຕໍ່ປະເທດຊາດ;

8. ນຳໃຊ້ມາດຕະການ, ນຳໃຊ້ອາວຸດ, ຍຸດໂທປະກອນ ເຂົ້າໃນການປະຕິບັດໜ້າທີ່ປ້ອງກັນຄວາມສະຫງົບແຫ່ງຊາດ ໃນກໍລະນີປະເຊີນໜ້າ ແລະ ສຸກເສີນ ເພື່ອຕອບຕ້ານກັບການກໍ່ອາຊະຍາກຳຕ່າງໆ ເຊັ່ນ ການຄ້າມະນຸດ, ການຄ້າຂາຍເຖື່ອນ, ຢາເສບຕິດ;

9. ນຳໃຊ້ມາດຕະການທາງດ້ານກົດໝາຍ ຕໍ່ຜູ້ລະເມີດຄວາມສະຫງົບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ, ເຕັກໂນໂລຊີ-ວິທະຍາສາດ, ສິ່ງແວດລ້ອມ ແລະ ສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

10. ນຳໃຊ້ວິທີການຕ່າງໆທີ່ຈຳເປັນ ໃນການປົກປ້ອງຜູ້ສະໜອງຂໍ້ມູນ, ຜູ້ຖືກຫາ, ຜູ້ເປັນພະຍານ, ຜູ້ຖືກເສຍຫາຍ ຢູ່ໃນຄະດີຕ່າງໆ ແລະ ປົກປ້ອງ ເພື່ອນຮ່ວມງານ ໃຫ້ມີຄວາມປອດໄພ;

11. ປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນຂ່າວສານ, ໃຫ້ສະໜອງເອກະສານ, ວັດຖຸສິ່ງຂອງຕ່າງໆ ເມື່ອມີຫຼັກຖານຢັ້ງຢືນວ່າມີສ່ວນພົວພັນກັບການເຄື່ອນໄຫວລະເມີດຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

12. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງທີ່ຕົນສັງກັດ ຢ່າງເປັນປົກກະຕິ;

13. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ມາດຕາ 35 ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ

ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ແມ່ນ ກຳລັງທີ່ເຮັດວຽກງານປ້ອງກັນຄວາມສະຫງົບປະຈຳທີ່ ຊຶ່ງບໍ່ໄດ້ຮັບການປະດັບຂັ້ນຄືກັນກັບກຳລັງປ້ອງກັນຄວາມສະຫງົບອາຊີບ.

ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ປະກອບດ້ວຍ:

- ກຳລັງປ້ອງກັນພາຍໃນ;
- ກຳລັງປ້ອງກັນຕົວ;
- ກຳລັງຮັກສາຄວາມປອດໄພ;
- ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ.

## ມາດຕາ 36 ທີ່ຕັ້ງ ແລະ ພາລະບົດບາດຂອງກຳລັງປ້ອງກັນພາຍໃນ

ກຳລັງປ້ອງກັນພາຍໃນ ແມ່ນ ພະນັກງານທີ່ໄດ້ຮັບການມອບໝາຍໃຫ້ເຮັດວຽກງານປ້ອງກັນຄວາມສະຫງົບ ຢູ່ ບັນດາກະຊວງ, ອົງການ ສຳນັກງານ, ໂຮງງານ, ກິດຈະການຕ່າງໆ ທີ່ຂຶ້ນກັບການຊີ້ນຳຂອງຄະນະນຳ ຢູ່ຂັ້ນນັ້ນ ແລະ ຄະນະນຳຂອງຂະແໜງການປ້ອງກັນຄວາມສະຫງົບ, ສຳລັບວຽກງານວິຊາສະເພາະນັ້ນ ແມ່ນຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ.

ກຳລັງປ້ອງກັນພາຍໃນ ມີ ພາລະບົດບາດເປັນເສນາທິການ ໃຫ້ແກ່ກະຊວງ, ອົງການ, ສຳນັກງານ, ໂຮງງານ ແລະ ກິດຈະການຕ່າງໆ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນພາຍໃນ ແລະ ເຄື່ອນໄຫວຕາມຫຼັກການວິຊາສະເພາະ ຕາມຂອບເຂດທີ່ຕົນຮັບຜິດຊອບ.

## ມາດຕາ 37 ສິດ ແລະ ໜ້າທີ່ຂອງກຳລັງປ້ອງກັນພາຍໃນ

ກຳລັງປ້ອງກັນພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງປະຕິບັດແນວທາງນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ;

2. ປະສານສົມທົບກັບຂະແໜງການປ້ອງກັນຄວາມສະຫງົບ, ຂະແໜງການປ້ອງກັນປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສະກັດກັ້ນ ແລະ ແກ້ໄຂສະພາບການຕ່າງໆ;

3. ຄົ້ນຄວ້າ ແລະ ນຳສະເໜີຄະນະນຳຂອງຕົນ ກ່ຽວກັບທິດທາງ ແຜນການ, ວິທີການ, ການເຄື່ອນໄຫວ ແລະ ມາດຕະການຕ່າງໆ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ເຄື່ອນໄຫວຕາມການມອບໝາຍຂອງຄະນະນຳຂອງຕົນ ແລະ ຄະນະນຳຂອງຂະແໜງການປ້ອງກັນຄວາມສະຫງົບ;

5. ໄດ້ຮັບການປະກອບ ແລະ ນຳໃຊ້ອາວຸດ, ພາຫະນະອຸປະກອນທີ່ຈຳເປັນຈຳນວນໜຶ່ງ ຕາມໜ້າທີ່ວິຊາສະເພາະຂອງຕົນ;

6. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

7. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງ ທີ່ຕົນສັງກັດ ຢ່າງເປັນປົກກະຕິ;

8. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 38 ທີ່ຕັ້ງ ແລະ ພາລະບົດບາດຂອງກຳລັງປ້ອງກັນຕົວ**

ກຳລັງປ້ອງກັນຕົວ ແມ່ນ ພະນັກງານ ລັດຖະກອນທີ່ໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກງານປ້ອງກັນຄວາມສະຫງົບ, ເປັນກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ທີ່ຈັດຕັ້ງຂຶ້ນຢູ່ກະຊວງ, ອົງການ, ສຳນັກງານ, ໂຮງງານ ແລະ ກິດຈະການຕ່າງໆທີ່ມີຄວາມຈຳເປັນ ພາຍໃຕ້ການຊີ້ນຳຂອງຄະນະນຳຂອງຕົນ ແລະ ໄດ້ຮັບການເຫັນດີຈາກກະຊວງປ້ອງກັນຄວາມສະຫງົບ, ສຳລັບວຽກງານວິຊາສະເພາະນັ້ນ ແມ່ນຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການປ້ອງກັນປະເທດ, ມີພາລະບົດບາດຮັບປະກັນຄວາມປອດໄພ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 39 ສິດ ແລະ ໜ້າທີ່ ຂອງກຳລັງປ້ອງກັນຕົວ**

ກຳລັງປ້ອງກັນຕົວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດທີ່ຕົນຮັບຜິດຊອບ;

2. ຍົກສູງສະຕິລະວັງຕົວ, ຕ້ານກົນອຸບາຍທຳລາຍມ້າງເພຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ, ກຽມພ້ອມສູ້ຮົບ ແລະ ສະກັດກັ້ນທຸກການລະເມີດລະບຽບກົດໝາຍ;

3. ເຂົ້າຮ່ວມ ແລະ ເປັນແບບຢ່າງໃນການຜະລິດ, ສ້າງເສດຖະກິດ, ລຶບລ້າງຄວາມທຸກຍາກ ແລະ ແກ້ໄຂຊີວິດການເປັນຢູ່ ໃຫ້ດີຂຶ້ນ;

4. ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ, ຮ່ຳຮຽນການເມືອງ, ຍົກລະດັບຄວາມຮູ້ທາງດ້ານການສຶກສາ, ວັດທະນະທຳ, ການທະຫານ ແລະ ລະບຽບກົດໝາຍ;

5. ໄດ້ຮັບການປະກອບອາວຸດ ແລະ ອຸປະກອນທີ່ຈຳເປັນ ເພື່ອຮັບໃຊ້ໃນການເຄື່ອນໄຫວເຮັດໜ້າທີ່ຂອງຕົນ;

6. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

7. ປະສານສົມທົບກັບທຸກພາກສ່ວນອື່ນ ທີ່ມີການພົວພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

8. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງ ທີ່ຕົນສັງກັດ ຢ່າງເປັນປົກກະຕິ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 40 ທີ່ຕັ້ງ ແລະ ພາລະບົດບາດຂອງກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ແມ່ນ ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ, ມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ຊຶ່ງໄດ້ຮັບການສ້າງຕັ້ງ, ຍຸບເລີກແລະຢູ່ໃນການຄຸ້ມຄອງ, ຊີ້ນຳຂອງກະຊວງປ້ອງກັນຄວາມສະຫງົບ ລວມທັງວຽກງານວິຊາສະເພາະຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ ໂດຍກົງ, ມີພາລະບົດບາດໃນການປ້ອງກັນ, ເວນຍາມຢູ່ສຳນັກງານ, ອົງການ, ໂຮງງານ, ໂຮງໝໍ, ໂຮງຮຽນ, ຫົວໜ່ວຍທຸລະກິດ, ອົງການຈັດຕັ້ງສາກົນ, ສະຖານທູດ, ສະຖານກົງສຸນ, ເຮືອນພັກຂອງຄົນຕ່າງປະເທດ ແລະ ພົນລະເມືອງລາວ ເພື່ອຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຕາມສະຖານທີ່ ທີ່ຕົນຮັບຜິດຊອບ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກຳລັງຮັກສາຄວາມປອດໄພ**

ກຳລັງຮັກສາຄວາມປອດໄພ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງປະຕິບັດແນວທາງ ນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ;

2. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

3. ຊອກຄົ້ນຫາສະພາບການ ກົນອຸບາຍ, ເລ່ຫຼ່ຽມ ການເຄື່ອນໄຫວຂອງບຸກຄົນ, ກຸ່ມຄົນ ບໍ່ດີ, ຍົກສູງສະຕິລະວັງຕົວ ໃນການຮັກສາຄວາມປອດໄພ ຂອງຊີວິດ, ສຸຂະພາບ ແລະ ຊັບສິນຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

4. ສະກັດກັ້ນ ແລະ ແກ້ໄຂທຸກການກະທຳຜິດ ຫຼື ເຫດການກໍ່ຄວາມບໍ່ສະຫງົບ ຢູ່ສະຖານທີ່ ທີ່ຕົນຮັບຜິດຊອບ;

5. ຈັດຕັ້ງກຳລັງໃນການຮັກສາຄວາມສະຫງົບ, ຄວາມປອດໄພ ຢູ່ສະຖານທີ່ ທີ່ຕົນຮັບຜິດຊອບຢ່າງເປັນປົກກະຕິ ພ້ອມທັງໄດ້ຮັບການປະກອບອຸປະກອນທີ່ຈຳເປັນສັບໃຊ້ເຂົ້າໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນ;

6. ໄດ້ຮັບນະໂຍບາຍອຸດໜູນ ແລະນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

7. ປະສານສົມທົບກັບທຸກພາກສ່ວນ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

8. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງ ທີ່ຕົນສັງກັດ ຢ່າງເປັນປົກກະຕິ;

9. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 42 ທີ່ຕັ້ງ ແລະ ພາລະບົດບາດຂອງກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ**

ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ ແມ່ນ ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ, ມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ, ປະຕິບັດໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຊຶ່ງຕິດພັນກັບການຜະລິດຢູ່ຮາກຖານບ້ານ.

ກຳລັງປ້ອງກັນຄວາມສະຫງົບບ້ານ ມີສາຍຕັ້ງຂຶ້ນກັບຂະແໜງການປ້ອງກັນຄວາມສະຫງົບ, ກອງຫຼອນບ້ານ ມີສາຍຕັ້ງຂຶ້ນກັບຂະແໜງການປ້ອງກັນປະເທດ, ມີພາລະບົດບາດ ປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໃນຂອບເຂດບ້ານຂອງຕົນ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ**

ກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ລະບຽບກົດໝາຍຂອງລັດ ແລະ ຄຳສັ່ງຂອງຂັ້ນເທິງ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

2. ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນຂອບເຂດບ້ານຂອງຕົນ;

3. ປຸກລະດົມ ຂົນຂວາຍປະຊາຊົນ ເຊື່ອມຊຶມແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ລະບຽບກົດໝາຍ ແລະ ກົດລະບຽບບ້ານ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບບ້ານຂອງຕົນ;

4. ຊອກຮູ້, ເກັບກຳສະພາບການ, ກົນອຸບາຍ, ເລ່ຫຼ່ຽມການເຄື່ອນໄຫວຂອງບຸກຄົນ ຫຼື ກຸ່ມຄົນ ບໍ່ດີ, ຍົກສູງສະຕິລະວັງຕົວ, ກຽມພ້ອມປ້ອງກັນ, ສະກັດກັ້ນ ແລະ ຕອບຕ້ານ ທຸກການລະເມີດລະບຽບກົດໝາຍ;

5. ຈັດຕັ້ງກຳລັງອອກເຄື່ອນໄຫວ, ກວດກາລາດຕະເວນ ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດບ້ານຂອງຕົນຢ່າງເປັນປົກກະຕິ;

6. ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ, ຮໍ່າຮຽນການເມືອງ, ຍົກສູງລະດັບການສຶກສາ, ວັດທະນະທຳ, ວິຊາສະເພາະຕຳຫຼວດ, ການທະຫານ ແລະ ລະບຽບກົດໝາຍ;

7. ໄດ້ຮັບການປະກອບອາວຸດ ແລະ ອຸປະກອນທີ່ຈຳເປັນ ເພື່ອຮັບໃຊ້ເຂົ້າໃນການເຮັດໜ້າທີ່ຂອງຕົນ;

8. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

9. ປະສານສົມທົບລະຫວ່າງກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ ກັບ ຫ້ອງການປ້ອງກັນຄວາມສະຫງົບ-ບໍລິການປະຊາຊົນ, ກຳລັງປ້ອງກັນຕົວ, ກຳລັງຮັກສາຄວາມປອດໄພ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

10.ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງ ທີ່ຕົນສັງກັດ ຢ່າງເປັນປົກກະຕິ;

11. ປະຕິບັດ ສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 44 ຜູ້ປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ**

ຜູ້ປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ແມ່ນ ພົນລະເມືອງທຸກຄົນທີ່ຕື່ນຕົວປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ທີ່ບໍ່ໄດ້ຢູ່ໃນກຳລັງປ້ອງກັນຄວາມສະຫງົບອາຊີບ ແລະ ເຄິ່ງອາຊີບ ຊຶ່ງມີພັນທະ ດັ່ງນີ້:

1. ໃຫ້ການຮ່ວມມືກັບກຳລັງປ້ອງກັນຄວາມສະຫງົບອາຊີບ ແລະ ເຄິ່ງອາຊີບ ໃນການປະຕິບັດໜ້າທີ່ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

2. ແຈ້ງ, ລາຍງານ ຫຼື ສະໜອງຂໍ້ມູນຂ່າວສານ, ເອກະສານຕ່າງໆ ທີ່ກ່ຽວພັນເຖິງກົນອຸບາຍ, ການເຄື່ອນໄຫວຂອງບຸກຄົນ, ກຸ່ມຄົນ ບໍ່ດີ ໃຫ້ກຳລັງປ້ອງກັນຄວາມສະຫງົບ ແລະ ການຈັດຕັ້ງທີ່ກ່ຽວຂ້ອງບ່ອນໃກ້ທີ່ສຸດ ຢ່າງທັນການ;

3. ສ້າງທຸກເງື່ອນໄຂ, ອຳນວຍຄວາມສະດວກ, ຊ່ວຍເຫຼືອ ແລະ ໃຫ້ການຮ່ວມມືແກ່ການຈັດຕັ້ງ, ບຸກຄົນທີ່ໄດ້ຮັບມອບໝາຍ ໃຫ້ເຄື່ອນໄຫວປະຕິບັດໜ້າທີ່ວິຊາສະເພາະ ໃນການສະກັດກັ້ນ, ຕ້ານກົນອຸບາຍຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ;

4. ປະຕິບັດຕາມການຮຽກຮ້ອງ ຂອງກຳລັງປະກອບອາວຸດປະຊາຊົນ;

5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ລະບຽບກົດໝາຍ.

ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ເຄື່ອນໄຫວ ຫຼື ດຳລົງຊີວິດ ຢູ່ດິນແດນ ສປປ ລາວ ກໍມີພັນທະປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ.

## ພາກທີ V
## ຂໍ້ຫ້າມ

### ມາດຕາ 45 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຈັດຕັ້ງ, ເຄື່ອນໄຫວ, ໂຄສະນາເຜີຍແຜ່ເອກະສານທີ່ຕ້ານແນວທາງ ນະໂຍບາຍຂອງລັດ;

2. ຊຸກຍູ້, ສົ່ງເສີມ, ບັງຄັບ, ຫຼອກລວງການຈັດຕັ້ງ, ບຸກຄົນອື່ນ ເພື່ອຕ້ານແນວທາງ ນະໂຍບາຍ ແລະ ລະບຽບກົດໝາຍຂອງລັດ;

3. ປັ່ນປ່ວນ ແບ່ງແຍກ, ທຳລາຍຄວາມສາມັກຄີພາຍໃນ ແລະ ຂອງປະຊາຊົນລາວບັນດາເຜົ່າ;

4. ເຂົ້າຮ່ວມ ຫຼື ຊ່ວຍເຫຼືອ, ສະໜອງຂໍ້ມູນຂ່າວສານ, ເອກະສານທີ່ເປັນຄວາມລັບຂອງລັດ ຫຼື ຄວາມລັບທາງລັດຖະການ, ສະໜອງເງິນ, ຊັບສິນ, ພາຫະນະ, ວັດຖຸປະກອບເຕັກນິກ, ອາວຸດຍຸດໂທປະກອນ ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຄື່ອນໄຫວລະເມີດຄວາມສະຫງົບຂອງຊາດ;

5. ລັກລອບນຳເຂົ້າ-ສົ່ງອອກ, ເຄື່ອນຍ້າຍ ຫຼື ມີໄວ້ໃນຄອບຄອງອາວຸດເສິກ, ທາດລະເບີດ ຫຼື ສານເຄມີຕ່າງໆທີ່ເປັນພິດ ລວມທັງສິ້ນສ່ວນອຸປະກອນປະກອບເປັນອາວຸດ ຫຼື ລະເບີດ;

6. ສົ່ງຂໍ້ມູນ ຂ່າວສານທາງດ້ານເອເລັກໂຕຣນິກ ທີ່ມີເນື້ອໃນກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ;

7. ໃຫ້ສິນບົນແກ່ເຈົ້າໜ້າທີ່, ທວງເອົາ, ຂໍເອົາ ຫຼື ຮັບ ສິນບົນ ເພື່ອຜົນປະໂຫຍດຂອງຕົນເອງ, ຄອບຄົວ ແລະ ພັກພວກ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

8. ເຕົ້າໂຮມ, ຊຸມນຸມ, ປະທ້ວງ ຫຼື ກໍ່ຈະລາຈົນ ທີ່ຂັດກັບລະບຽບກົດໝາຍ;

9. ຕ້ານ ແລະ ຂັດຂວາງການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຄວາມສະຫງົບ;

10. ແຈ້ງຂໍ້ມູນ ຫຼື ລາຍງານເທັດໃຫ້ກຳລັງປ້ອງກັນຄວາມສະຫງົບ;

11. ສ້າງຕັ້ງກຳລັງປ້ອງກັນຕົວ ແລະ ກຳລັງຮັກສາຄວາມປອດໄພ ໂດຍບໍ່ໄດ້ຮັບອະນຸຍາດ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 46 ຂໍ້ຫ້າມສຳລັບກຳລັງປ້ອງກັນຄວາມສະຫງົບອາຊີບ ແລະ ເຄິ່ງອາຊີບ**

ຂໍ້ຫ້າມສຳລັບກຳລັງປ້ອງກັນຄວາມສະຫງົບອາຊີບ ແລະ ເຄິ່ງອາຊີບ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ພາກທີ VI

## ການຄຸ້ມຄອງ, ກວດກາ ວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

### ໝວດທີ 1

### ອົງການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

**ມາດຕາ 47 ອົງການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງປ້ອງກັນປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ປະສານສົມທົບກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບ ປະກອບດ້ວຍ:

1. ກະຊວງປ້ອງກັນຄວາມສະຫງົບ;
2. ກະຊວງປ້ອງກັນປະເທດ;

3. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ;

4. ກອງບັນຊາການທະຫານ ແຂວງ, ນະຄອນ;

5. ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ;

6. ກອງບັນຊາການທະຫານ ເມືອງ, ເທດສະບານ;

7. ກໍາລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ;

8. ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ.

**ມາດຕາ 48 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ**

ສິດ ແລະ ໜ້າທີ່ໃນການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຂອງກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກອງບັນຊາການປ້ອງກັນຄວາມສະຫງົບ, ກອງບັນຊາການທະຫານ ແຂວງ, ນະຄອນ, ກອງບັນຊາການປ້ອງກັນຄວາມສະຫງົບ, ກອງບັນຊາການທະຫານ ເມືອງ, ເທດສະບານ ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍ ກໍາລັງປ້ອງກັນຄວາມສະຫງົບປະຊາຊົນ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ.

ສໍາລັບ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຂອງກໍາລັງປ້ອງກັນຄວາມສະຫງົບ ບ້ານ ແລະ ກອງຫຼອນບ້ານ ໄດ້ກໍານົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້.

**ມາດຕາ 49 ສິດ ແລະ ໜ້າທີ່ຂອງກະຊວງ, ອົງການອື່ນ**

ໃນການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ກະຊວງ, ອົງການອື່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ກໍານົດແຜນການ, ໂຄງການ, ການເຄື່ອນໄຫວ ແລະ ພັດທະນາວຽກງານຂອງຕົນ ໂດຍພົວພັນກັບວຽກງານປ້ອງກັນຄວາມສະຫງົບ;

2. ຈັດຕັ້ງຄະນະປ້ອງກັນພາຍໃນ, ກໍາລັງປ້ອງກັນຕົວ ເພື່ອປ້ອງກັນຕ້ານແຜນການລັດຖະກອນ ແລະ ຮັກສາຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍ ໃນກະຊວງ, ອົງການສໍານັກງານຂອງຕົນ;

3. ຈັດຕັ້ງໂຄສະນາ ເຜີຍແຜ່, ສຶກສາອົບຮົມວຽກງານປ້ອງກັນຄວາມສະຫງົບໃຫ້ພະນັກງານ ລັດຖະກອນ ເຂົ້າຮ່ວມໃນວຽກງານຮັກສາຄວາມສະຫງົບ, ຄວາມປອດໄພ ໃນກະຊວງ, ສຳນັກງານ ອົງການຂອງຕົນ;

4. ກຳນົດລະບຽບການຮັກສາຄວາມສະຫງົບ, ຄວາມປອດໄພ ຢູ່ກະຊວງ, ອົງການ ສຳນັກງານຂອງຕົນ;

5. ແຈ້ງ, ລາຍງານ ຫຼື ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ, ເອກະສານຕ່າງໆ ທີ່ກ່ຽວພັນເຖິງການລະເມີດຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ໃນກະຊວງ, ອົງການ ສຳນັກງານໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງທັນການ ໃຫ້ກຳລັງປ້ອງກັນຄວາມສະຫງົບບ່ອນໃກ້ທີ່ສຸດ;

6. ປະຕິບັດຕາມການຮ້ອງຂໍຂອງກຳລັງປະກອບອາວຸດປະຊາຊົນ;

7. ປະກອບວັດຖຸປະກອນ-ເຕັກນິກ, ພາຫະນະຮັບໃຊ້ເຂົ້າໃນວຽກງານຮັກສາຄວາມສະຫງົບ ແລະ ຄວາມປອດໄພ ໃນກະຊວງ, ອົງການ ສຳນັກງານຂອງຕົນ;

8. ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ ໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

9. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງປ້ອງກັນປະເທດ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ຂອງອົງການປົກຄອງ ແຂວງ, ນະຄອນ ແລະ ເມືອງ,ເທດສະບານ**

ໃນການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ອົງການປົກຄອງ ແຂວງ, ນະຄອນ ແລະ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ວາງແຜນ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ ໂດຍສົມທົບກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

2. ຈັດຕັ້ງປະຕິບັດແຜນຍຸດທະສາດ, ຄຳສັ່ງ, ລະບຽບການຕ່າງໆ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ;

3. ສຶກສາອົບຮົມ ການເມືອງ-ແນວຄິດ, ລະບຽບກົດໝາຍ ໃຫ້ພະນັກງານ ລັດຖະກອນ ມີຄວາມສະຫງົບພາຍໃນ ແລະ ມີສະຕິຕື່ນຕົວສະໝັກໃຈເຂົ້າຮ່ວມໃນຂະບວນການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

4. ຊີ້ນຳ, ຄຸ້ມຄອງ ວຽກງານປ້ອງກັນຄວາມສະຫງົບ ຢູ່ອົງການປົກຄອງທີ່ເປັນຂັ້ນລຸ່ມຂອງຕົນ;

5. ກຳແໜ້ນສະພາບການ, ຕິດຕາມແຜນການເຄື່ອນໄຫວຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ ທີ່ກໍ່ໃຫ້ເກີດຄວາມບໍ່ສະຫງົບ ແລະ ເປັນເຈົ້າການສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແກ້ໄຂຢ່າງທັນການ;

6. ໂຄສະນາ, ສຶກສາອົບຮົມ, ປຸກລະດົມຂົນຂວາຍ ໃຫ້ການຈັດຕັ້ງ, ໂຮງງານ, ໂຮງຮຽນ, ໂຮງໝໍ, ຫົວໜ່ວຍທຸລະກິດ, ຮາກຖານບ້ານ, ພະນັກງານ ລັດຖະກອນ, ປະຊາຊົນ ເຂົ້າຮ່ວມໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

7. ອອກລະບຽບການ, ມາດຕະການຕ່າງໆ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບ ໂດຍສອດຄ່ອງກັບລະບຽບກົດໝາຍ;

8. ອອກລະບຽບການຮັກສາຄວາມສະຫງົບ ໃນເຂດພື້ນທີ່ສຳປະທານ, ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ ຂອງຊາດ;

9. ຈັດຕັ້ງກຳລັງປ້ອງກັນຕົວ ເພື່ອຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ໃນສຳນັກງານ ແລະ ບໍລິເວນອ້ອມຂ້າງຂອງຕົນ;

10. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

ສຳລັບ ແຂວງ, ນະຄອນ, ເມືອງ, ເທດສະບານ ທີ່ມີຊາຍແດນຕິດຈອດກັບປະເທດອື່ນ ຕ້ອງມີລະບຽບການ, ມາດຕະການ ເພື່ອຄຸ້ມຄອງ, ປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂສະຖານະການຕ່າງໆ ທີ່ອາດຈະເກີດຂຶ້ນໃນກໍລະນີປົກກະຕິ ແລະ ສຸກເສີນ.

**ມາດຕາ 51 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ຄຳສັ່ງ, ຄຳແນະນຳ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

2. ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ໃຫ້ບຸກຄົນ, ຄອບຄົວ, ສັງຄົມ ຮັບຮູ້, ເຂົ້າໃຈ ແລະ ປະກອບສ່ວນເຂົ້າໃນການປ້ອງກັນຄວາມສະຫງົບ ພາຍໃນບ້ານຂອງຕົນ;

3. ອອກກົດລະບຽບ ກ່ຽວກັບການປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ຄຸ້ມຄອງພົນລະເມືອງ ລວມທັງຄົນຕ່າງປະເທດ ທີ່ເຂົ້າ-ອອກ ພາຍໃນບ້ານຂອງຕົນ;

4. ວາງແຜນການພັດທະນາບ້ານ ໂດຍຕິດພັນຢ່າງລະອຽດແໜ້ນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງບ້ານ;

5. ຊອກຮູ້, ກຳສະພາບການ, ລາຍງານການເຄື່ອນໄຫວຂອງບຸກຄົນ, ກຸ່ມຄົນ ບໍ່ດີ ທີ່ກໍ່ໃຫ້ເກີດຄວາມບໍ່ສະຫງົບພາຍໃນບ້ານຂອງຕົນ;

6. ເປັນເຈົ້າການສົມທົບກັບບ້ານໃກ້ຄຽງ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຮັກສາຄວາມສະຫງົບ ໃຫ້ໄດ້ໃນຂັ້ນພື້ນຖານ;

7. ຈັດຕັ້ງກຳລັງເວນຍາມ ຮ່ວມກັບກຳລັງປ້ອງກັນຄວາມສະຫງົບບ້ານ ແລະ ກອງຫຼອນບ້ານ ເພື່ອຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໃນຂອບເຂດບ້ານຂອງຕົນ;

8. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 52 ຄວາມຮັບຜິດຊອບ ຂອງຫົວໜ່ວຍທຸລະກິດ**

ໃນການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຫົວໜ່ວຍທຸລະກິດ ມີຄວາມຮັບຜິດຊອບຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງກຳລັງປ້ອງກັນຕົວ ໂດຍໄດ້ຮັບອະນຸຍາດ, ຊີ້ນຳ ຈາກຂະແໜງການປ້ອງກັນຄວາມສະຫງົບ ແລະ ນຳໃຊ້ກຳລັງຮັກສາຄວາມປອດໄພ ພ້ອມທັງມີລະບົບຮັກສາຄວາມປອດໄພເພື່ອປົກປັກຮັກສາຄວາມສະຫງົບ ຢູ່ໃນພື້ນທີ່ຂອງຕົນ;

2. ປະກອບສ່ວນກັບກຳລັງປ້ອງກັນຄວາມສະຫງົບບ້ານ ເປັນເຈົ້າການປຸກລະດົມຮາກຖານປະຊາຊົນ ເຂົ້າຮ່ວມການເຄື່ອນໄຫວວຽກງານປ້ອງກັນຄວາມສະຫງົບ;

3. ແຈ້ງ, ລາຍງານ ຫຼື ສະໜອງຂໍ້ມູນຂ່າວສານ, ເອກະສານຕ່າງໆ ທີ່ກ່ຽວພັນເຖິງກົນອຸບາຍ, ການເຄື່ອນໄຫວຂອງບຸກຄົນ, ກຸ່ມຄົນ ບໍ່ດີ ໃຫ້ກຳລັງປະກອບອາວຸດປະຊາຊົນ ຫຼື ອົງການປົກຄອງທ້ອງຖິ່ນບ່ອນໃກ້ທີ່ສຸດ ຢ່າງທັນການ;

4. ສະຫຼຸບ ລາຍງານ ການຈັດຕັ້ງປະຕິບັດວຽກງານປ້ອງກັນຄວາມສະຫງົບ ໃຫ້ກຳລັງປ້ອງກັນຕົວຢ່າງເປັນປົກກະຕິ.

ການດຳເນີນທຸລະກິດ ຕ້ອງຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 53 ຄວາມຮັບຜິດຊອບຂອງຄອບຄົວ ແລະ ພົນລະເມືອງ

ແຕ່ລະຄອບຄົວ ຕ້ອງເປັນເຈົ້າການສຶກສາອົບຮົມ, ຄຸ້ມຄອງສະມາຊິກຄອບຄົວຂອງຕົນ ໃຫ້ມີສະຕິລະວັງຕົວຕໍ່ກົນອຸບາຍຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ, ເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ປົກປ້ອງວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງທ້ອງຖິ່ນ ແລະ ຂອງເຜົ່າ ພ້ອມທັງປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ໃນຂອບເຂດບ້ານຂອງຕົນ.

ຄອບຄົວ ແລະ ພົນລະເມືອງລາວ ມີພັນທະແຈ້ງ ຫຼື ລາຍງານ ຕໍ່ອົງການປົກຄອງບ້ານ, ຕໍ່ກຳລັງປ້ອງກັນຄວາມສະຫງົບບ່ອນທີ່ໃກ້ສຸດ ເມື່ອພົບເຫັນການເຄື່ອນໄຫວ ກໍ່ຄວາມບໍ່ສະຫງົບຂອງບຸກຄົນ ແລະ ກຸ່ມຄົນ ບໍ່ດີ.

## ໝວດທີ 2

## ອົງການກວດກາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ

### ມາດຕາ 54 ອົງການກວດກາ

ອົງການກວດກາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນຄະນະນຳ, ຄະນະບັນຊາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ແລະ ວຽກງານປ້ອງກັນຄວາມສະຫງົບ ແຂວງ, ນະຄອນ, ເມືອງ, ເທດສະບານ ແລະ ບ້ານ;

2. ອົງການກວດກາພາຍນອກ ຊຶ່ງແມ່ນຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບສົມສູນກາງ, ແຂວງ ແລະ ອົງການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອື່ນ.

### ມາດຕາ 55 ເນື້ອໃນການກວດກາ

ການກວດກາ ມີ ເນື້ອໃນ ດັ່ງນີ້:

1. ກວດກາການປະຕິບັດສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

2. ກວດກາການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ;

3. ກວດກາບັນຫາອື່ນ ທີ່ພົວພັນກັບວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 56 ຮູບການການກວດກາ

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ;
2. ການກວດກາຕາມຄຳສັ່ງທາງລັດຖະການ ຫຼື ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ໃນການດຳເນີນກວດກາວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 57 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ພະນັກງານ ແລະ ນັກຮົບ ທີ່ປະຕິບັດໜ້າທີ່ປ້ອງກັນຄວາມສະຫງົບແຫ່ງຊາດ ທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ເຊັ່ນ ນາມມະຍົດວິລະຊົນ, ນັກຮົບແຂ່ງຂັນ, ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ເລື່ອນຊັ້ນ, ເລື່ອນໜ້າທີ່ຮັບຜິດຊອບ ແລະ ຮ່າຍຽນຍົກລະດັບ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ສຳລັບ ພະນັກງານ ແລະ ນັກຮົບ ຜູ້ເສຍອົງຄະ, ເສຍສະລະຊີວິດ ຈາກການປະຕິບັດໜ້າທີ່ປ້ອງກັນຄວາມສະຫງົບ ຈະໄດ້ຮັບນະໂຍບາຍອຸດໜູນ ຕາມລະບຽບກົດໝາຍ.

**ມາດຕາ 58 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ຕັກເຕືອນ, ລົງວິໄນ, ປັບໃໝ ຫຼື ລົງໂທດຕາມກໍລະນີເບົາ ຫຼື ໜັກ ລວມທັງການໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ສຳລັບ ມາດຕະການຕໍ່ພະນັກງານ ແລະ ນັກຮົບ ໃນກຳລັງປ້ອງກັນຄວາມສະຫງົບ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

## ພາກທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 59 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 60 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້